ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດລາຍງານສະຖິຕິເງິນຕາ

## ປະຈໍາໄຕມາດ ທີ 1 ຂອງປີ 2019

ທະນາຄານແຫ່ງ ສປປ ລາວ

# ສາລະບານ

I. ສະພາບລວມ ..... 1

II. ອັດຕາເງິນເຟີ້ ..... 1

III. ຂະແໜງເງິນຕາ-ການເງິນ ..... 2

3.1. ນະໂຍບາຍເງິນຕາ ..... 2

3.2. ຖານເງິນຕາ ..... 2

3.3. ປະລິມານເງິນ ..... 3

3.4. ອັດຕາແລກປ່ຽນ ..... 3

3.5. ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ..... 4

3.6. ອັດຕາດອກເບັ້ຍ ..... 4

3.7. ເງິນຝາກ ..... 4

3.8. ສິນເຊື່ອ ..... 5

3.9. ຕະຫຼາດຫຼັກຊັບ ..... 6

IV. ດຸນການຊໍາລະກັບຕ່າງປະເທດ ..... 6

4.1. ດຸນການຊໍາລະລວມ ..... 6

4.2. ດຸນບັນຊີຊໍາລະປົກກະຕິ ..... 7

4.2.1 ດຸນການຄ້າ ..... 7

4.3. ດຸນບັນຊີການເງິນ ..... 8

# ສາລະບານຮູບ


ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້ ........ 1

ຮູບທີ 2. ເສັ້ນສະແດງອັດຕາເງິນເຟີ້ລວມ ........ 2

ຮູບທີ 3. ໂຄງປະກອບຂອງຖານເງິນຕາ ........ 2

ຮູບທີ 4. ການຂະຫຍາຍຕົວຂອງປະລິມານເງິນ M2 ........ 3

ຮູບທີ 5. ການເໜັງຕີງອັດຕາແລກປ່ຽນ (ໄຕມາດທຽບໄຕມາດ) ........ 4

ຮູບທີ 6. ເງິນຝາກຂອງທະນາຄານທຸລະກິດ ........ 5

ຮູບທີ 7. ສິນເຊື່ອຂອງທະນາຄານທຸລະກິດ (ແຍກຕາມຂະແໜງການ) ........ 5

ຮູບທີ 8. ດຸນການຊຳລະກັບຕ່າງປະເທດ ........ 7

ຮູບທີ 9. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ ........ 7

ຮູບທີ 10. ການສົ່ງອອກສິນຄ້າ ........ 8

ຮູບທີ 11. ການນຳເຂົ້າສິນຄ້າ ........ 8

ຮູບທີ 12. ດຸນບັນຊີການເງິນ ........ 9

# ສາລະບານຕາຕະລາງ

ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານເດືອນ 12/2015 = 100) ............ 10
ຕາຕະລາງທີ 2. ອັດຕາເງິນເຟີ້ (%) ............ 10
ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ) ............ 11
ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ) ............ 12
ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ) ............ 13
ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (ຕື້ກີບ) ............ 14
ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ ............ 15
ຕາຕະລາງທີ 8. ອັດຕາດອກເບ້ຍ (ຄິດເປັນສ່ວນຮ້ອຍຕໍ່ປີ) ............ 16
ຕາຕະລາງທີ 9. ເງິນຝາກຂອງທະນາຄານທຸລະກິດ (ຕື້ກີບ) ............ 17
ຕາຕະລາງທີ 10. ເງິນຝາກຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (ຕື້ກີບ) ............ 18
ຕາຕະລາງທີ 11. ສິນເຊື່ອຂອງທະນາຄານທຸລະກິດ (ຕື້ກີບ) ............ 19
ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (ຕື້ກີບ) ............ 20
ຕາຕະລາງທີ 13. ດຸນການຊໍາລະກັບຕ່າງປະເທດ (ລ້ານໂດລາສະຫະລັດ) ............ 21
ຕາຕະລາງທີ 14. ການຄ້າຕ່າງປະເທດ (ລ້ານໂດລາສະຫະລັດ) ............ 23
ຕາຕະລາງທີ 15. ທີ່ຕັ້ງສໍານັກງານຂອງແຕ່ລະທະນາຄານທຸລະກິດ ............ 24

# ບົດນຳ

ໃນບົດລາຍງານສະຖິຕິເງິນຕາປະຈຳໄຕມາດ ແມ່ນການສັງລວມຂໍ້ມູນສະຖິຕິເງິນຕາ ຂອງຂະແໜງການທະນາຄານ ຊຶ່ງກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ໄດ້ເກັບກຳສັງລວມ ແລ້ວເຜີຍແຜ່ບົດລາຍງານສະຖິຕິເງິນຕານີ້ ທາງເວັບໄຊຂອງ ທຫລ ເພື່ອໃຫ້ສັງຄົມໄດ້ນຳໃຊ້ຕາມຄວາມຈຳເປັນ ແລະ ຕ້ອງການຂອງແຕ່ລະພາກສ່ວນ.

ເຖິງຢ່າງໃດກໍຕາມ, ມີບາງຂໍ້ມູນໃນບົດລາຍງານສະບັບນີ້ ຍັງເປັນຕົວເລກຄາດຄະເນເບື້ອງຕົ້ນ ແລະ ອາດມີການປັບປຸງຂໍ້ມູນຄືນ. ສະນັ້ນ, ຂ້າພະເຈົ້າຕາງໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍອະໄພມາຍັງທຸກໆທ່ານໃນທີ່ນີ້ດ້ວຍ. ພ້ອມນີ້, ຂໍຮັບເອົາຄຳຕິຊົມຕ່າງໆຈາກທ່ານຜູ້ຊົມໃຊ້ດ້ວຍຄວາມຈິງໃຈ ເພື່ອການປັບປຸງບົດລາຍງານສະຖິຕິເງິນຕາສະບັບຕໍ່ໄປໃຫ້ມີຄວາມສົມບູນຍິ່ງຂຶ້ນ.

**ຫົວໜ້າກົມນະໂຍບາຍເງິນຕາ**

ທະນາຄານ ແຫ່ງ ສປປ ລາວ
ກົມນະໂຍບາຍເງິນຕາ

ຄຳພຸດ ສິດທິລາດ

# I. ສະພາບລວມ

ໃນໄຕມາດ 1 ຂອງປີ 2019, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສືບຕໍ່ດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍ ໂດຍການຮັກສາອັດຕາດອກເບ້ຍພື້ນຖານ ແລະ ອັດຕາເງິນແຮຝາກບັງຄັບໄວ້ໃນອັດຕາເດີມ, ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ; ດັດສົມຕະຫຼາດເງິນຕາຕ່າງປະເທດ ເມື່ອເຫັນວ່າມີຄວາມຈຳເປັນ ໄປຄຽງຄູ່ກັບການຕິດຕາມກະແສເງິນຕາຕ່າງປະເທດໄຫຼເຂົ້າ-ອອກ ຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ, ທຫລ ສາມາດຮັກສາສະເຖຍລະພາບເງິນຕາແຫ່ງຊາດໄດ້ຢ່າງໜັ້ນທ່ຽງ, ອັດຕາເງິນເຟີ້ ຢູ່ໃນລະດັບ 1,58%; ເງິນກີບທຽບເງິນໂດລາ ແຂງຄ່າ 0,14%; ປະລິມານເງິນ (M2) ເພີ່ມຂຶ້ນ 3,92%; ເງິນຝາກຂອງທະນາຄານທຸລະກິດ ເພີ່ມຂຶ້ນ 4,52%; ສິນເຊື່ອຂອງທະນາຄານທຸລະກິດ ຂະຫຍາຍຕົວ 1,03%; ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າໄດ້ 3,47 ເດືອນ. ນອກຈາກນີ້, ດ້ານການຄ້າຕ່າງປະເທດ ມູນຄ່າການຄ້າ ບັນລຸ 2.779,12 ລ້ານໂດລາສະຫະລັດ, ໃນນັ້ນ, ມູນຄ່າການສົ່ງອອກ ບັນລຸ 1.386,98 ລ້ານໂດລາສະຫະລັດ, ຫຼຸດລົງ 3,56% ແລະ ມູນຄ່າການນຳເຂົ້າ 1.392,14 ລ້ານໂດລາສະຫະລັດ, ຫຼຸດລົງ 15,5% ທຽບໃສ່ໄຕມາດຜ່ານມາ.

# II. ອັດຕາເງິນເຟີ້

ອັດຕາເງິນເຟີ້ໃນໄຕມາດ 1 ຂອງປີ 2019 ຢູ່ໃນລະດັບ 1,58% ຫຼຸດລົງຈາກລະດັບ 1,92% ໃນໄຕມາດ 4/2018. ສາເຫດມາຈາກໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າ ຫຼຸດລົງຈາກ 1,21% ມາເປັນ 1,12%; ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ ຫຼຸດລົງຈາກ 6,13% ມາເປັນ 4,53% ແລະ ໝວດຄົມມະນາຄົມຂົນສົ່ງ ຈາກ 4,15% ມາເປັນ 2,53% (ຮູບທີ 1).

**ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

### ຮູບທີ 2. ເສັ້ນສະແດງອັດຕາເງິນເຟີ້ລວມ




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# III. ຂະແໜງເງິນຕາ-ການເງິນ

## 3.1. ນະໂຍບາຍເງິນຕາ

ທຫລ ສືບຕໍ່ຮັກສາອັດຕາດອກເບ້ຍພື້ນຖານ ໄວ້ໃນລະດັບ 4% ຕໍ່ປີ ສໍາລັບເງິນກູ້ໄລຍະສັ້ນບໍ່ເກີນ 7 ວັນ, ຮັກສາອັດຕາເງິນແຮຝາກບັງຄັບ ໄວ້ໃນລະດັບ 5% ສໍາລັບເງິນກີບ ແລະ 10% ສໍາລັບເງິນຕາຕ່າງປະເທດ; ສືບຕໍ່ຊຸກຍູ້ການເຄື່ອນໄຫວຂອງຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ໃຫ້ກູ້ຢືມແຫຼ່ງສຸດທ້າຍ ຢ່າງເປັນປົກກະຕິ.

## 3.2. ຖານເງິນຕາ

ໃນທ້າຍໄຕມາດ 1 ຂອງປີ 2019, ຖານເງິນຕາ ມີຍອດເຫຼືອ 24.739,22 ຕື້ກີບ, ເພີ່ມຂຶ້ນ 3,63% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 6,25% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ຖານເງິນຕາເພີ່ມຂຶ້ນໃນໄຕມາດນີ້ ແມ່ນຍ້ອນເງິນຝາກຂອງ ທທກ ຢູ່ ທຫລ ເພີ່ມຂຶ້ນ 4,07% ເນື່ອງຈາກ ທທກ ຮັບໂອນເງິນຈາກຕ່າງປະເທດ ແລະ ທຫລ ຊື້ພັນທະບັດລັດຖະບານກັບ ທທກ.

### ຮູບທີ 3. ໂຄງປະກອບຂອງຖານເງິນຕາ




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.3. ປະລິມານເງິນ

ປະລິມານເງິນ (M2) ມີທັງໝົດ 84.105,45 ຕື້ກີບ, ເພີ່ມຂຶ້ນ 3,92% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 9,26% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຍ້ອນໄດ້ຮັບເງິນລົງທຶນຂອງໂຄງການສ້າງທາງລົດໄຟລາວ-ຈີນ ແລະ ການລະດົມເງິນຝາກຈາກສັງຄົມ ຂອງທະນາຄານທຸລະກິດ.

ອົງປະກອບຂອງປະລິມານເງິນ ປະກອບມີ: ເງິນຝາກເປັນສະກຸນເງິນກີບ 41,81%, ເງິນຝາກເປັນສະກຸນເງິນຕາຕ່າງປະເທດ 49,89% ແລະ ເງິນຢູ່ນອກລະບົບທະນາຄານ 8,30% (ຮູບທີ 4).

**ຮູບທີ 4. ການຂະຫຍາຍຕົວຂອງປະລິມານເງິນ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.4. ອັດຕາແລກປ່ຽນ

ທຫລ ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນລະຫວ່າງເງິນກີບທຽບກັບເງິນໂດລາສະຫະລັດ ໃຫ້ແກ່ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕ່າງປະເທດ ເພື່ອເປັນບ່ອນອີງໃນການກຳນົດອັດຕາຊື້-ຂາຍຂອງຕົນ ບໍ່ໃຫ້ເກີນ ±0,25%, ພ້ອມທັງດຳເນີນການດັດສົມຕະຫຼາດເງິນຕາຕ່າງປະເທດ ເມື່ອເຫັນວ່າມີຄວາມຈຳເປັນ.

ໃນໄຕມາດ 1 ຂອງປີ 2019, ສະພາບອັດຕາແລກປ່ຽນສະເລ່ຍທົ່ວລະບົບ ເງິນກີບທຽບເງິນໂດລາສະຫະລັດ ແຂງຄ່າ 0,14%, ຢູ່ໃນລະດັບ 8.615,35 ກີບ/ໂດລາ ແລະ ເງິນກີບທຽບເງິນບາດ ອ່ອນຄ່າ 2,78%, ຢູ່ໃນລະດັບ 275,05 ກີບ/ບາດ ຊຶ່ງເໜັງຕີງໃນຂອບທີ່ ທຫລ ກຳນົດໄວ້ ±5%.

ຮູບທີ 5. ການເໜັງຕີງອັດຕາແລກປ່ຽນ (ໄຕມາດທຽບໄຕມາດ)




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

ຮອດທ້າຍໄຕມາດ 1 ຂອງປີ 2019, ທະນາຄານທຸລະກິດ ມີຈຳນວນທັງໝົດ 43 ແຫ່ງ[1] (ຕາຕະລາງທີ 15). ໃນນັ້ນ, ທົ່ວລະບົບທະນາຄານທຸລະກິດ ມີຍອດຊັບສິນທັງໝົດ 135.946,91 ຕື້ກີບ, ເພີ່ມຂຶ້ນ 4,26%; ຍອດເງິນຝາກ 77.004,74 ຕື້ກີບ, ເພີ່ມຂຶ້ນ 4,52% (ບໍ່ລວມເງິນຝາກຂອງບຸກຄົນບໍ່ຕັ້ງຖິ່ນຖານຢູ່ລາວ). ໃນໄລຍະ 3 ເດືອນຜ່ານມາ, ທະນາຄານທຸລະກິດໄດ້ປະກອບສ່ວນ ຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວ ໃນນັ້ນ, ສິນເຊື່ອໃຫ້ພາກສ່ວນເສດຖະກິດ ຢູ່ໃນລະດັບ 69.764,09 ຕື້ກີບ, ເພີ່ມຂຶ້ນ 1,03%. ຄຽງຄູ່ກັນນັ້ນ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ມີທັງໝົດ 185 ແຫ່ງ[2].

## 3.6. ອັດຕາດອກເບ້ຍ

ໃນໄຕມາດນີ້, ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງທະນາຄານທຸລະກິດ ໂດຍລວມເພີ່ມຂຶ້ນເລັກນ້ອຍໃນບາງສະກຸນເງິນ ເມື່ອທຽບໃສ່ໄຕມາດຜ່ານມາ. ຊຶ່ງໃນນັ້ນ, ອັດຕາດອກເບ້ຍເງິນຝາກມີກຳນົດ 12 ເດືອນ ສະກຸນເງິນກີບ ຢູ່ໃນລະຫວ່າງ 3,00-7,00% ຕໍ່ປີ, ສະກຸນເງິນບາດ 0,75-6,00% ຕໍ່ປີ ແລະ ສະກຸນເງິນໂດລາສະຫະລັດ 0,70-6,25% ຕໍ່ປີ. ສ່ວນອັດຕາດອກເບ້ຍເງິນກູ້ຂອງ ທທກ ໄລຍະສັ້ນ ລູກຄ້າຊັ້ນດີ ສະກຸນເງິນກີບ ຢູ່ໃນລະຫວ່າງ 5,25-14,00% ຕໍ່ປີ, ສະກຸນເງິນບາດ 4,29-14,00% ຕໍ່ປີ ແລະ ສະກຸນເງິນໂດລາ 4,00-10,00% ຕໍ່ປີ.

## 3.7. ເງິນຝາກ

ເງິນຝາກຂອງທະນາຄານທຸລະກິດ (ບໍ່ລວມເງິນຝາກຂອງຜູ້ທີ່ບໍ່ຕັ້ງຖິ່ນຖານຢູ່ ສປປ ລາວ) ມີຍອດທັງໝົດ 74.004,74 ຕື້ກີບ, ເພີ່ມຂຶ້ນ 4,52% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 9,8% ທຽບໃສ່ໄລຍະດຽວກັນຂອງ

[1] ໃນນັ້ນມີ 110 ສາຂາ, 532 ໜ່ວຍບໍລິການ, 35 ໜ່ວຍແລກປ່ຽນເງິນຕາ ແລະ ຕູ້ ATM 1.243 ໜ່ວຍ.

[2] ໃນນັ້ນ, ສະຖາບັນການເງິນທີ່ຮັບຝາກ 20 ແຫ່ງ, ສະຖາບັນການເງິນທີ່ບໍ່ຮັບຝາກ 77 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 27 ແຫ່ງ, ໂຮງຊວດຈຳ 27 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 29 ແຫ່ງ ແລະ ບໍລິສັດຕົວແທນໂອນເງິນດ່ວນ 5 ແຫ່ງ.

[2] ໃນນັ້ນ, ສະຖາບັນການເງິນທີ່ຮັບຝາກ 20 ແຫ່ງ, ສະຖາບັນການເງິນທີ່ບໍ່ຮັບຝາກ 77 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 27 ແຫ່ງ, ໂຮງຊວດຈຳ 27 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 29 ແຫ່ງ ແລະ ບໍລິສັດຕົວແທນໂອນເງິນດ່ວນ 5 ແຫ່ງ.

[3] ຂະແໜງການອື່ນໆປະກອບມີ: ຂະແໜງຂົນສົ່ງ, ຂະແໜງສະໜອງວັດຖຸ ແລະ ເຕັກນິກ ແລະ ຂະແໜງອື່ນໆ.

ປີຜ່ານມາ. ໃນນັ້ນ, ເງິນຝາກເປັນສະກຸນເງິນກີບ ເພີ່ມຂຶ້ນ 3,76%, ກວມເອົາ 45,51% ຂອງເງິນຝາກທັງໝົດ ແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 5,17%, ກວມເອົາ 54,49% ຂອງເງິນຝາກທັງໝົດ.

**ຮູບທີ 6. ເງິນຝາກຂອງທະນາຄານທຸລະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.8. ສິນເຊື່ອ

ສິນເຊື່ອຂອງທະນາຄານທຸລະກິດ ໃນທ້າຍໄຕມາດ 1 ຂອງປີ 2019 ມີຍອດທັງໝົດ 69.764,09 ຕື້ກີບ, ຂະຫຍາຍຕົວ 1,03% ທຽບໃສ່ໄຕມາດຜ່ານມາ ແລະ 3,53% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ການປະກອບສ່ວນຂອງສິນເຊື່ອ ແຍກຕາມຂະແໜງການ ຕໍ່ກັບການຂະຫຍາຍຕົວຂອງສິນເຊື່ອທັງໝົດມີ: ຂະແໜງການຄ້າ 0,72%, ຂະແໜງບໍລິການ 0,54%, ຂະແໜງກໍ່ສ້າງ 0,54%, ຂະແໜງອຸດສາຫະກຳ 0,41%, ຂະແໜງກະສິກຳ 0,04%, ຂະແໜງຫັດຖະກຳ -0,06% ແລະ ຂະແໜງການອື່ນໆ[3] -1,15% ຕາມລຳດັບ.

**ຮູບທີ 7. ສິນເຊື່ອຂອງທະນາຄານທຸລະກິດ (ແຍກຕາມຂະແໜງການ)**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

[3] ຂະແໜງການອື່ນໆປະກອບມີ: ຂະແໜງຂົນສົ່ງ, ຂະແໜງສະໜອງວັດຖຸ ແລະ ເຕັກນິກ ແລະ ຂະແໜງອື່ນໆ.

## 3.9. ຕະຫຼາດຫຼັກຊັບ

ໃນໄຕມາດທີ 1 ຂອງປີ 2019, ດັດຊະນີຕະຫຼາດຫຼັກຊັບລາວປິດຢູ່ທີ່ 834,21 ຈຸດ, ເພີ່ມຂຶ້ນ 1,13% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 0,27% ທຽບໃສ່ດັດຊະນີທ້າຍປີຜ່ານມາ, ມີປະລິມານການຊື້-ຂາຍຮຸ້ນທັງໝົດ 3,08 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 13,98 ຕື້ກີບ, ຫຼຸດລົງ 31,9% ທຽບໃສ່ໄຕມາດຜ່ານມາ. ໃນນັ້ນ, ມູນຄ່າການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ກວມອັດຕາສ່ວນ 54,05% ຂອງມູນຄ່າການຊື້-ຂາຍຮຸ້ນທັງໝົດ.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ຊື່ບໍລິສັດ | ໄຕມາດ 1/2019 | | | ໄຕມາດ 4/2018 | | | % ການປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາປິດ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາປິດ | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ |
| **ດັດຊະນີປິດ** | | **834,21** | | | **824,92** | | | | **1,13** |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 1.486.100 | 8.838.190.000 | 6.850 | 1.603.300 | 8.926.505.000 | 5.600 | -7,31 | -0,99 | 22,32 |
| ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ | 906.8 | 3.563.735.000 | 3.930 | 2.318.800 | 9.340.900.000 | 3.950 | -60,89 | -61,85 | -0,51 |
| ບໍລິສັດ ລາວເວີນ ມະຫາຊົນ | - | - | 7.150 | - | - | 8.000 | - | - | -10,63 |
| ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ | 15.2 | 13.546.000 | 1.150 | 24.300 | 34.355.000 | 1.450 | -37,45 | -60,57 | -20,69 |
| ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ | 51 | 101.465.000 | 2.200 | 4.200 | 7.190.000 | 1.800 | 1.114,29 | 1.311,20 | 22,22 |
| ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ | 20.3 | 21.042.000 | 1.080 | 26.100 | 31.115.000 | 1.200 | -22 | -32 | -10 |
| ບໍລິສັດ ຊີມັງລາວ ມະຫາຊົນ | 275.9 | 680.245.000 | 2.200 | 30.800 | 59.610.000 | 2.400 | 795,78 | 1.041,16 | -8,33 |
| ບໍລິສັດ ມະຫາທຶນເຊົ່າສິນເຊື່ອ ມະຫາຊົນ | 247 | 708.406.000 | 2.900 | 624.900 | 1.783.615.000 | 2.850 | -60,47 | -60,28 | 1,75 |
| ບໍລິສັດ ລາວອາໂກຣເທັກ ມະຫາຊົນ | 81,100 | 60.757.500 | 725 | 267.900 | 355.675.000 | 750 | -69,73 | -82,92 | -3,33 |
| **ທັງໝົດ** | **3.083.400** | **13.987.386.500** | | **4.900.300** | **20.538.965.000** | | **-37,08** | **-31,90** | |

**ແຫຼ່ງຂໍ້ມູນ:** ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທະນາຄານແຫ່ງ ສປປ ລາວ.

# IV. ດຸນການຊຳລະກັບຕ່າງປະເທດ

## 4.1. ດຸນການຊຳລະລວມ

ໃນໄຕມາດ 1 ຂອງປີ 2019, ດຸນການຊຳລະກັບຕ່າງປະເທດ ເກີນດຸນ 11,29 ລ້ານໂດລາສະຫະລັດ ຍ້ອນມີກະແສເງິນໄຫຼເຂົ້າ (ສຸດທິ) ໃນດຸນບັນຊີການເງິນ ຈຳນວນ 329,9 ລ້ານໂດລາສະຫະລັດ, ເຖິງແມ່ນວ່າດຸນບັນຊີຊຳລະປົກກະຕິ ສືບຕໍ່ຂາດດຸນຈຳນວນ 160,79 ລ້ານໂດລາສະຫະລັດ ກໍຕາມ. ສຳລັບຄັງສຳຮອງເງິນຕາຕ່າງປະເທດໃນໄຕມາດນີ້ ສາມາດກຸ້ມການນຳເຂົ້າສິນຄ້າໄດ້ 3,47 ເດືອນ[4].

[4] ມູນຄ່າສິນຄ້ານຳເຂົ້າສະເລ່ຍຕໍ່ເດືອນ ຂອງ 3 ເດືອນຕົ້ນປີ 2019 ແມ່ນນຳໃຊ້ 255,02 ລ້ານໂດລາສະຫະລັດຕໍ່ເດືອນ ຊຶ່ງບໍ່ລວມການນຳເຂົ້າສິນຄ້າທີ່ມີແຫຼ່ງທຶນຮອງຮັບ. ໃນນັ້ນ, ລວມມີການນຳເຂົ້າຂອງນັກລົງທຶນຕ່າງປະເທດ, ການນຳເຂົ້າຂອງໂຄງການຊ່ວຍເຫຼືອລ້າ ແລະ ການນຳເຂົ້າກູ້ຢືມພາກລັດ, ການນຳເຂົ້າຂອງອົງການຈັດຕັ້ງສາກົນ ແລະ ສະຖານທູດ (ຈຳແນກຕາມລະຫັດການແຈ້ງພາສີນຳເຂົ້າ).

**ຮູບທີ 8. ດຸນການຊຳລະກັບຕ່າງປະເທດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2. ດຸນບັນຊີຊຳລະປົກກະຕິ

ດຸນບັນຊີຊຳລະປົກກະຕິ ຂາດດຸນຫຼຸດລົງຢູ່ໃນລະດັບ 160,79 ລ້ານໂດລາສະຫະລັດ, ຊຶ່ງຂາດດຸນຫຼຸດລົງ 38,52% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 10,65% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍແມ່ນຍ້ອນດຸນການຄ້າ ຂາດດຸນຫຼຸດລົງ 97,54% (ຮູບທີ 9).

**ຮູບທີ 9. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

### 4.2.1 ດຸນການຄ້າ

ໃນໄຕມາດນີ້, ດຸນການຄ້າ ຂາດດຸນ 5,16 ລ້ານໂດລາສະຫະລັດ, ຂາດດຸນຫຼຸດລົງ 97,54% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 92,24% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຍ້ອນການນຳເຂົ້າສິນຄ້າ ຫຼຸດລົງ ໂດຍສະເພາະການນຳເຂົ້າສິນຄ້າທຶນ ແລະ ສິນຄ້າໃຊ້ສອຍ.

**ການສົ່ງອອກ:** ບັນລຸໄດ້ 1.386,98 ລ້ານໂດລາສະຫະລັດ, ຫຼຸດລົງ 3,56% ທຽບໃສ່ໄຕມາດຜ່ານມາ ແຕ່ເພີ່ມຂຶ້ນ 7,86% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການສົ່ງອອກຫຼຸດລົງ ແມ່ນມາຈາກການ

ຫຼຸດລົງຂອງການສົ່ງອອກຜະລິດຕະພັນບໍ່ແຮ່, ໄຟຟ້າ, ເຄື່ອງຈັກ ແລະ ອຸປະກອນກົນຈັກ, ເຄື່ອງອຸປະກອນໄຟຟ້າ ແລະ ອື່ນໆ ເຫຼົ່ານີ້ເປັນຕົ້ນ. (ຮູບທີ 10).

**ຮູບທີ 10. ການສົ່ງອອກສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການນຳເຂົ້າ:** ມີມູນຄ່າ 1.392,14 ລ້ານໂດລາສະຫະລັດ, ຫຼຸດລົງ 15,5% ທຽບໃສ່ໄຕມາດຜ່ານມາ ແຕ່ເພີ່ມຂຶ້ນ 2,94% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍມາຈາກການຫຼຸດລົງຂອງການນຳເຂົ້າສິນຄ້າທຶນ ຫຼຸດລົງ 30,64% ທຽບໃສ່ໄຕມາດຜ່ານມາ ຊຶ່ງກວມເອົາ 31,91% ຂອງການນຳເຂົ້າທັງໝົດ ແລະ ສິນຄ້າໃຊ້ສອຍ ຫຼຸດລົງ 21,74% ທຽບໃສ່ໄຕມາດຜ່ານມາ ຊຶ່ງກວມເອົາ 22,55% ຂອງການນຳເຂົ້າທັງໝົດ (ຮູບທີ 11).

**ຮູບທີ 11. ການນຳເຂົ້າສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.3. ດຸນບັນຊີການເງິນ

ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າ (ສຸດທິ) 329,9 ລ້ານໂດລາສະຫະລັດ, ຫຼຸດລົງ 21,22% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 26,48% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍແມ່ນຍ້ອນການລົງທຶນອື່ນໆ, ການລົງທຶນໃນຫຼັກຊັບ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ຫຼຸດລົງ. ໃນນັ້ນ, ການລົງທຶນອື່ນໆ ມີກະແສເງິນໄຫຼເຂົ້າສຸດທິ 68,68 ລ້ານໂດລາສະຫະລັດ, ຫຼຸດລົງ 48,19% ເມື່ອທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດ

ລົງ 37,25% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍຍ້ອນຊັບສິນຕ່າງປະເທດສຸດທິ ເພີ່ມຂຶ້ນ ຈາກການເພີ່ມຂຶ້ນຂອງກະແສເງິນຝາກຢູ່ຕ່າງປະເທດ ຂອງທະນາຄານທຸລະກິດ ແລະ ວິສາຫະກິດ. ໃນຂະນະດຽວກັນ, ໜີ້ສິນຕ່າງປະເທດສຸດທິ ເພີ່ມຂຶ້ນ ຈາກການເພີ່ມຂຶ້ນຂອງກະແສເງິນກູ້ຢືມຈາກຕ່າງປະເທດ ຂອງຫົວໜ່ວຍວິສາຫະກິດ ໂດຍສະເພາະເງິນກູ້ຢືມຂອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ. ສໍາລັບການລົງທຶນໃນຫຼັກຊັບ ມີກະແສເງິນໄຫຼເຂົ້າສຸດທິ 91,97 ລ້ານໂດລາສະຫະລັດ, ຫຼຸດລົງ 19% ເມື່ອທຽບໃສ່ໄຕມາດຜ່ານມາ ສາເຫດຕົ້ນຕໍຍ້ອນກະແສເງິນໄຫຼເຂົ້າຈາກການລົງທຶນຫຼັກຊັບປະເພດໜີ້ ຫຼຸດລົງ. ໃນໄຕມາດນີ້, ບໍລິສັດຜະລິດໄຟຟ້າມະຫາຊົນ (EDL-Gen) ໄດ້ມີການອອກຈໍາໜ່າຍພັນທະບັດ ໃນຕະຫຼາດພັນທະບັດຢູ່ປະເທດໄທ ມີມູນຄ່າ 3.840 ລ້ານບາດ ຫຼື ທຽບເທົ່າ 115 ລ້ານໂດລາສະຫະລັດ. ສໍາລັບການລົງທຶນໂດຍກົງຈາກຕ່າງປະເທດ ມີກະແສເງິນໄຫຼເຂົ້າສຸດທິ ມູນຄ່າ 169,25 ລ້ານໂດລາສະຫະລັດ, ຫຼຸດລົງ 1,97% ເມື່ອທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 51,88% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຍ້ອນການລົງທຶນໃນຂະແໜງການກໍ່ສ້າງ ຫຼຸດລົງ. ໃນໄຕມາດນີ້, ຂະແໜງການລົງທຶນທີ່ດຶງດູດນັກລົງທຶນຕ່າງປະເທດ ມາລົງທຶນຫຼາຍກວ່າໝູ່ແມ່ນ ຂະແໜງການໄຟຟ້າ ກວມເອົາ 33,33% ຮອງລົງມາແມ່ນ ຂະແໜງກະສິກໍາ ກວມເອົາ 32,03% ແລະ ຂະແໜງການກໍ່ສ້າງ 26,41% ຂອງກະແສເງິນລົງທຶນທັງໝົດ. ສ່ວນປະເທດທີ່ມາລົງທຶນຫຼາຍທີ່ສຸດແມ່ນປະເທດ ສປ ຈີນ ກວມເອົາ 89,06% ແລະ ຮອງລົງມາແມ່ນ ສ. ເກົາຫຼີ ກວມເອົາ 7,15% ຂອງກະແສເງິນລົງທຶນທັງໝົດ.

**ຮູບທີ 12. ດຸນບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານເດືອນ 12/2015 = 100)

| ໝວດສິນຄ້າ | ໄຕມາດ 1/2018 | ໄຕມາດ 2/2018 | ໄຕມາດ 3/2018 | ໄຕມາດ 4/2018 | ໄຕມາດ 1/2019 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ** | **103,23** | **103,91** | **105,06** | **104,69** | **104,86** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 102,84 | 103,41 | 105,18 | 103,95 | 103,99 |
| 2. ໝວດເຫຼົ້າ ແລະ ຢາສູບ | 101,96 | 102,00 | 102,19 | 102,87 | 103,70 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 106,03 | 108,23 | 109,51 | 110,00 | 110,82 |
| 4. ໝວດທີ່ພັກອາໃສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງ | 103,35 | 103,72 | 104,15 | 104,22 | 104,42 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 102,34 | 102,87 | 103,19 | 103,28 | 103,96 |
| 6. ໝວດການຮັກສາສຸຂະພາບ | 101,97 | 102,05 | 102,32 | 102,85 | 103,15 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 104,93 | 105,94 | 107,58 | 108,24 | 107,59 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 101,17 | 101,51 | 101,68 | 101,92 | 102,60 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 100,23 | 100,31 | 100,24 | 100,24 | 101,07 |
| 10. ໝວດການສຶກສາ | 100,94 | 100,97 | 101,03 | 101,26 | 101,33 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 103,73 | 104,71 | 104,55 | 104,60 | 105,42 |
| 12. ໝວດການສິນຄ້າ ແລະ ການບໍລິການອື່ນໆ | 103,56 | 103,93 | 103,10 | 103,58 | 104,61 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 2. ອັດຕາເງິນເຟີ້ (%)

| ໝວດສິນຄ້າ | ໄຕມາດ 1/2018 | ໄຕມາດ 2/2018 | ໄຕມາດ 3/2018 | ໄຕມາດ 4/2018 | ໄຕມາດ 1/2019 |
|---|---|---|---|---|---|
| **ອັດຕາເງິນເຟີ້** | **1,53** | **2,01** | **2,69** | **1,92** | **1,58** |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 0,61 | 1,04 | 2,10 | 1,21 | 1,12 |
| 2. ໝວດເຫຼົ້າ ແລະ ຢາສູບ | 1,08 | 0,76 | 0,82 | 0,97 | 1,71 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 3,61 | 5,43 | 6,61 | 6,13 | 4,53 |
| 4. ໝວດທີ່ພັກອາໃສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງ | 2,12 | 2,06 | 2,00 | 1,35 | 1,03 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 1,22 | 1,44 | 1,35 | 1,21 | 1,59 |
| 6. ໝວດການຮັກສາສຸຂະພາບ | 1,32 | 1,06 | 1,03 | 1,09 | 1,16 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 3,47 | 4,24 | 5,44 | 4,15 | 2,53 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 1,27 | 1,62 | 2,13 | 1,68 | 1,42 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | -0,02 | 0,03 | -0,04 | 0,10 | 0,84 |
| 10. ໝວດການສຶກສາ | 0,54 | 0,57 | 0,43 | 0,33 | 0,39 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 2,34 | 3,05 | 2,65 | 1,65 | 1,63 |
| 12. ໝວດການສິນຄ້າ ແລະ ການບໍລິການອື່ນໆ | 2,20 | 1,98 | 1,00 | 0,71 | 1,02 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ)

| ລາຍການ | ໄຕມາດ 1/2018 | ໄຕມາດ 2/2018 | ໄຕມາດ 3/2018 | ໄຕມາດ 4/2018(R) | ໄຕມາດ 1/2019 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **7.516,38** | **7.538,52** | **7.461,35** | **6.853,36** | **6.992,16** |
| ຊັບສິນຕ່າງປະເທດ | 8.134,97 | 8.145,46 | 8.072,64 | 7.462,12 | 7.603,14 |
| ໜີ້ສິນຕ່າງປະເທດ | -618,59 | -606,94 | -611,29 | -608,76 | -610,98 |
| **ຊັບສິນພາຍໃນສຸດທິ** | **15.767,51** | **16.466,08** | **16.995,90** | **17.019,26** | **17.747,07** |
| **ສິນເຊື່ອພາຍໃນສຸດທິ** | **13.212,73** | **13.771,92** | **14.206,22** | **13.789,79** | **13.681,60** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 286,86 | 797,55 | 1.185,92 | 406,31 | 477,50 |
| ສິນເຊື່ອໃຫ້ລັດຖະບານ | 1.525,02 | 1.607,64 | 1.590,84 | 1.344,01 | 2.186,94 |
| ເງິນຝາກລັດຖະບານ | -1.238,16 | -810,09 | -404,92 | -937,70 | -1.709,44 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 6.346,89 | 6.333,00 | 6.324,65 | 6.343,44 | 6.274,53 |
| ສິນເຊື່ອໃຫ້ສະຖາບັນການເງິນ | 6.346,89 | 6.641,37 | 6.695,65 | 7.040,04 | 6.929,57 |
| ພັນທະບັດທະນາຄານກາງ | 6.578,98 | -3.407,74 | -3.439,25 | -3.452,58 | -2.526,64 |
| ລາຍການອື່ນໆສຸດທິ | -3.356,84 | 6.101,90 | 6.228,93 | 6.682,05 | 6.592,11 |
| **ຖານເງິນຕາ** | **5.911,62** | **24.004,59** | **24.457,26** | **23.872,62** | **24.739,22** |
| ເງິນສົດຢູ່ຂອດຈໍລະຈອນ | 23.283,89 | 9.053,44 | 8.578,31 | 9.200,23 | 9.379,23 |
| ເງິນຝາກ | 9.257,00 | 14.951,15 | 15.878,95 | 14.672,39 | 15.359,99 |
| ເງິນຝາກກະແສລາຍວັນ | 14.026,89 | 10.370,64 | 11.577,11 | 10.694,05 | 11.449,43 |
| ເງິນແຮຝາກບັງຄັບ | 10.074,52 | 3.621,92 | 3.671,89 | 3.624,76 | 3.649,73 |
| ທຶນຈົດທະບຽນຂອງ ທທກ | 3.660,32 | 903,64 | 554,45 | 245,01 | 142,71 |
| ເງິນຝາກຂອງພາກສ່ວນອື່ນໆ | 285,20 | 54,95 | 75,50 | 108,57 | 118,12 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.
**ໝາຍເຫດ:** R ໝາຍເຖິງຕົວເລກປັບປຸງໃໝ່

# ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ)

| ລາຍການ | ໄຕມາດ 1/2018 | ໄຕມາດ 2/2018 | ໄຕມາດ 3/2018 | ໄຕມາດ 4/2018[R] | ໄຕມາດ 1/2019 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-15.955,91** | **-18.520,70** | **-17.043,73** | **-16.101,65** | **-14.665,95** |
| ຊັບສິນຕ່າງປະເທດ | 10.430,23 | 8.362,61 | 10.127,68 | 9.697,10 | 10.761,66 |
| ໜີ້ສິນຕ່າງປະເທດ | -26.386,14 | -26.883,31 | -27.171,41 | -25.798,75 | -25.427,61 |
| **ຄັງສະສົມສຸດທິ** | **19.741,98** | **21.235,34** | **22.874,14** | **20.215,29** | **24.093,39** |
| ຄັງສະສົມ | 25.799,56 | 27.254,18 | 28.883,92 | 26.568,30 | 30.375,56 |
| ເງິນກູ້ຢືມຈາກທຫລ | -6.057,58 | -6.018,84 | -6.009,78 | -6.353,01 | -6.282,17 |
| **ສິນເຊື່ອໃຫ້ລັດຖະບານສຸດທິ** | **4.561,44** | **5.106,02** | **5.388,86** | **6.181,70** | **3.650,76** |
| ເປັນສະກຸນເງິນກີບ | 5.113,87 | 5.519,05 | 5.873,06 | 6.442,87 | 4.334,20 |
| ເປັນສະກຸນເງິນຕາຕ່າງປະເທດ | -552,43 | -413,03 | -484,20 | -261,17 | -683,44 |
| **ຊັບສິນພາຍໃນສຸດທິ (ຍົກເວັ້ນສິນເຊື່ອໃຫ້ລັດຖະບານ)** | **61.786,08** | **62.303,64** | **61.685,59** | **63.377,51** | **63.926,56** |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 67.386,40 | 67.489,22 | 68.791,48 | 69.052,63 | 69.764,07 |
| ເປັນສະກຸນເງິນຕາຕ່າງປະເທດ | 34.538,10 | 34.884,03 | 35.393,82 | 35.290,99 | 35.856,57 |
| ສິນເຊື່ອໃຫ້ພາກເອກະຊົນ | 60.661,23 | 60.625,04 | 62.445,26 | 63.197,18 | 63.997,24 |
| ເປັນສະກຸນເງິນຕາຕ່າງປະເທດ | 28.147,97 | 28.369,16 | 29.405,41 | 29.778,79 | 30.456,05 |
| ສິນເຊື່ອໃຫ້ພາກສ່ວນລັດວິສາຫະກິດ | 6.725,17 | 6.864,18 | 6.346,22 | 5.855,45 | 5.766,83 |
| ເປັນສະກຸນເງິນຕາຕ່າງປະເທດ | 6.390,13 | 6.514,87 | 5.988,41 | 5.512,20 | 5.400,52 |
| **ຊັບສິນອື່ນໆສຸດທິ** | **-5.600,32** | **-5.185,58** | **-7.105,89** | **-5.675,12** | **-5.837,51** |
| **ເງິນຝາກລູກຄ້າ** | **70.133,57** | **70.124,29** | **72.904,81** | **73.672,85** | **77.004,74** |
| ເປັນເງິນກີບ | 32.558,95 | 32.974,68 | 33.358,30 | 33.778,86 | 35.048,34 |
| ເປັນສະກຸນເງິນຕາຕ່າງປະເທດ | 37.574,62 | 37.149,61 | 39.546,51 | 39.893,99 | 41.956,40 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

**ໝາຍເຫດ:** R ໝາຍເຖິງຕົວເລກປັບປຸງໃໝ່

# ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ)

| ລາຍການ | ໄຕມາດ 1/2018 | ໄຕມາດ 2/2018 | ໄຕມາດ 3/2018 | ໄຕມາດ 4/2018(R) | ໄຕມາດ 1/2019 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-8.439,53** | **-10.982,18** | **-9.582,38** | **-9.248,29** | **-7.673,79** |
| ຊັບສິນຕ່າງປະເທດ | 18.565,20 | 16.508,07 | 18.200,32 | 17.159,22 | 18.364,80 |
| ໜີ້ສິນຕ່າງປະເທດ | -27.004,73 | -27.490,25 | -27.782,70 | -26.407,51 | -26.038,59 |
| **ຊັບສິນພາຍໃນສຸດທິ** | **85.417,22** | **87.859,70** | **89.020,50** | **90.178,57** | **91.779,27** |
| **ສິນເຊື່ອພາຍໃນ** | **78.581,59** | **79.725,79** | **81.690,91** | **81.984,08** | **80.166,86** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 4.848,30 | 5.903,57 | 6.574,78 | 6.588,01 | 4.128,26 |
| ສິນເຊື່ອໃຫ້ລັດຖະບານ | 8.569,43 | 9.033,00 | 8.948,64 | 9.125,48 | 8.938,46 |
| ເງິນຝາກລັດຖະບານ | -3.721,13 | -3.129,43 | -2.373,86 | -2.537,47 | -4.810,20 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 73.733,29 | 73.822,22 | 75.116,13 | 75.396,07 | 76.038,60 |
| ສິນເຊື່ອໃຫ້ລັດວິສາຫະກິດ | 13.072,06 | 13.197,18 | 12.670,87 | 12.198,89 | 12.041,36 |
| ສິນເຊື່ອໃຫ້ພາກເອກະຊົນ | 60.661,23 | 60.625,04 | 62.445,26 | 63.197,18 | 63.997,24 |
| **ລາຍການອື່ນໆສຸດທິ** | **6.835,63** | **8.133,91** | **7.329,59** | **8.194,49** | **11.612,41** |
| ທຶນທີ່ທະນາຄານກູ້ຈາກລັດຖະບານ | -23,19 | -23,54 | -23,76 | -23,85 | -23,99 |
| ເງິນຝາກມີບັນຫາ | -351,67 | -161,39 | -275,17 | -162,79 | -202,14 |
| ບັນຊີທຶນ | -12.484,06 | -12.503,16 | -13.443,61 | -13.121,64 | -12.858,41 |
| ອື່ນໆ | 19.694,55 | 20.822,00 | 21.072,13 | 21.502,77 | 24.696,95 |
| **ປະລິມານເງິນຕາມຄວາມໝາຍກວ້າງ** | **76.977,67** | **76.877,51** | **79.438,07** | **80.930,28** | **84.105,45** |
| **ປະລິມານເງິນຄວາມໝາຍແຄບ** | **11.107,22** | **10.820,76** | **10.558,08** | **11.327,12** | **11.398,81** |
| ເງິນຢູ່ນອກລະບົບທະນາຄານ | 6.837,25 | 6.698,27 | 6.457,76 | 7.148,86 | 6.982,59 |
| ເງິນຝາກກະແສລາຍວັນ | 4.269,97 | 4.122,49 | 4.100,32 | 4.178,26 | 4.416,22 |
| **ປະລິມານເງິນປະເພດອື່ນໆ** | **65.870,45** | **66.056,75** | **68.879,99** | **69.603,16** | **72.706,64** |
| ເງິນຝາກປະຢັດ ແລະ ຝາກມີກຳນົດ | 28.295,83 | 28.907,14 | 29.333,48 | 29.709,17 | 30.750,24 |
| ເງິນຝາກເປັນເງິນຕາຕ່າງປະເທດ | 37.574,62 | 37.149,61 | 39.546,51 | 39.893,99 | 41.956,40 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

**ໝາຍເຫດ:** R ໝາຍເຖິງຕົວເລກປັບປຸງໃໝ່

## ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (ຕື້ກີບ)

| ລາຍການ | ໄຕມາດ 1/2018 | ໄຕມາດ 2/2018 | ໄຕມາດ 3/2018 | ໄຕມາດ 4/2018(R) | ໄຕມາດ 1/2019 |
|---|---|---|---|---|---|
| ທະນາຄານທຸລະກິດລັດ + ທະນາຄານສະເພາະກິດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **53.766,93** | **53.659,38** | **56.360,40** | **56.031,04** | **59.719,45** |
| ອັດຕາສ່ວນ (%) | 42,75 | 42,53 | 42,55 | 42,97 | 43,93 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 1,09 | -0,20 | 5,03 | -0,58 | 6,58 |
| ທະນາຄານຮ່ວມທຶນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **12.702,99** | **12.743,60** | **12.510,46** | **12.305,79** | **12.600,84** |
| ອັດຕາສ່ວນ (%) | 10,10 | 10,10 | 9,44 | 9,44 | 9,27 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 5,21 | 0,32 | -1,83 | -1,64 | 2,40 |
| ທະນາຄານເອກະຊົນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **22.959,50** | **23.316,69** | **24.106,09** | **24.421,91** | **24.264,83** |
| ອັດຕາສ່ວນ (%) | 18,26 | 18,48 | 18,20 | 18,73 | 17,85 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 2,15 | 1,56 | 3,39 | 1,31 | -0,64 |
| ທະນາຄານສາຂາຕ່າງປະເທດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **36.330,51** | **36.463,26** | **39.493,32** | **37.628,58** | **39.361,79** |
| ອັດຕາສ່ວນ (%) | 28,89 | 28,90 | 29,81 | 28,86 | 28,95 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,79 | 0,37 | 8,31 | -4,72 | 4,61 |
| ລວມທັງໝົດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **125.759,93** | **126.182,93** | **132.470,27** | **130.387,32** | **135.946,91** |
| ອັດຕາສ່ວນ (%) | 100,00 | 100,00 | 100,00 | 100,00 | 100,00 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 2,74 | 0,34 | 4,98 | -1,57 | 4,26 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.
**ໝາຍເຫດ:** R ໝາຍເຖິງຕົວເລກປັບປຸງໃໝ່

# ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ

| ໄຕມາດ/ປີ | ກີບ/ໂດລາສະຫະລັດ | | | ກີບ/ບາດ | | |
|---|---|---|---|---|---|---|
| | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍຕະຫຼາດ | ສະເລ່ຍທົ່ວລະບົບ | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍຕະຫຼາດ | ສະເລ່ຍທົ່ວລະບົບ |
| ໄຕມາດ 1/2011 | 8.053,18 | 8.056,80 | **8.054,99** | 264,66 | 264,77 | **264,72** |
| ໄຕມາດ 2/2011 | 8.029,34 | 8.034,16 | **8.031,75** | 265,81 | 265,86 | **265,84** |
| ໄຕມາດ 3/2011 | 8.009,88 | 8.016,99 | **8.013,43** | 266,57 | 266,65 | **266,61** |
| ໄຕມາດ 4/2011 | 8.014,46 | 8.016,90 | **8.015,68** | 259,97 | 260,06 | **260,02** |
| ໄຕມາດ 1/2012 | 8.003,56 | 8.006,44 | **8.005,00** | 259,36 | 259,43 | **259,40** |
| ໄຕມາດ 2/2012 | 8.006,93 | 8.008,79 | **8.007,86** | 256,95 | 257,26 | **257,11** |
| ໄຕມາດ 3/2012 | 8.013,92 | 8.014,84 | **8.014,38** | 256,16 | 255,85 | **256,01** |
| ໄຕມາດ 4/2012 | 8.000,22 | 8.002,76 | **8.001,49** | 261,22 | 261,09 | **261,16** |
| ໄຕມາດ 1/2013 | 7.897,90 | 7.904,22 | **7.901,06** | 265,12 | 264,92 | **265,02** |
| ໄຕມາດ 2/2013 | 7.692,53 | 7.691,30 | **7.691,92** | 258,72 | 258,50 | **258,61** |
| ໄຕມາດ 3/2013 | 7.815,12 | 7.939,30 | **7.877,21** | 249,97 | 255,04 | **252,51** |
| ໄຕມາດ 4/2013 | 7.935,95 | 8.007,74 | **7.971,84** | 251,61 | 254,01 | **252,81** |
| ໄຕມາດ 1/2014 | 8.029,33 | 8.055,14 | **8.042,23** | 247,44 | 252,11 | **249,77** |
| ໄຕມາດ 2/2014 | 8.050,00 | 8.066,23 | **8.058,11** | 249,75 | 250,83 | **250,29** |
| ໄຕມາດ 3/2014 | 8.043,06 | 8.078,12 | **8.060,59** | 251,60 | 251,70 | **251,65** |
| ໄຕມາດ 4/2014 | 8.059,67 | 8.078,93 | **8.069,30** | 248,51 | 250,67 | **249,59** |
| ໄຕມາດ 1/2015 | 8.108,95 | 8.145,80 | **8.127,37** | 250,30 | 247,48 | **248,89** |
| ໄຕມາດ 2/2015 | 8.104,36 | 8.116,02 | **8.110,19** | 246,78 | 247,77 | **247,28** |
| ໄຕມາດ 3/2015 | 8.160,49 | 8.211,00 | **8.185,74** | 235,57 | 237,05 | **236,31** |
| ໄຕມາດ 4/2015 | 8.151,05 | 8.205,25 | **8.178,15** | 229,52 | 230,24 | **229,88** |
| ໄຕມາດ 1/2016 | 8.134,21 | 8.166,02 | **8.150,12** | 229,75 | 229,77 | **229,76** |
| ໄຕມາດ 2/2016 | 8.113,33 | 8.135,37 | **8.124,35** | 231,50 | 231,89 | **231,70** |
| ໄຕມາດ 3/2016 | 8.095,42 | 8.160,44 | **8.127,93** | 233,80 | 234,49 | **234,15** |
| ໄຕມາດ 4/2016 | 8.160,74 | 8.469,57 | **8.315,16** | 232,39 | 240,13 | **236,26** |
| ໄຕມາດ 1/2017 | 8.194,25 | 8.470,05 | **8.332,15** | 235,14 | 239,73 | **237,44** |
| ໄຕມາດ 2/2017 | 8.213,55 | 8.493,84 | **8.353,69** | 241,47 | 247,01 | **244,24** |
| ໄຕມາດ 3/2017 | 8.278,93 | 8.453,34 | **8.366,13** | 250,05 | 252,90 | **251,47** |
| ໄຕມາດ 4/2017 | 8.300,02 | 8.385,83 | **8.342,93** | 254,03 | 255,60 | **254,81** |
| ໄຕມາດ 1/2018 | 8.286,43 | 8.319,52 | **8.302,97** | 264,16 | 264,54 | **264,35** |
